ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# BIC - BCEL ໂອນເງິນຂ້າມປອດໄພ ແລະ ຮັບທັນທີ



ພິທີເປີດຕົວການໃຫ້ບໍລິການໂອນເງິນຂ້າມທະນາຄານຜ່ານ Mobile Application ລະຫວ່າງທະນາຄານບີໄອຊີຈຳກັດ (BIC) ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ໄດ້ຈັດຂຶ້ນໃນວັນທີ 14 ກຸມພາ 2020 ທີ່ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປລາວ (ທຫລ) ແລະ ມີທ່ານ ລິມ ໄວ ຮຸ່ງ ຜູ້ອຳນວຍການ BIC, ທ່ານ ບັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການ BCEL, ມີຜູ້ບໍລິຫານລະດັບສູງຂອງ 2 ທະນາຄານ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ການຮ່ວມມືຄັ້ງນີ້ເຮັດໃຫ້ການບໍລິການໂອນເງິນລະຫວ່າງ 2 ທະນາຄານງ່າຍຂຶ້ນຊຶ່ງສຳເລັດແບບ Real Time ໂດຍບໍ່ຕ້ອງເຂົ້າມາທະນາຄານ, ໝາຍຄວາມວ່າ: ລູກຄ້າຂອງ BCEL ສາມາດນຳໃຊ້ແອັບ BCEL One ເພື່ອໂອນເງິນຫາບັນຊີຂອງ BIC ໄດ້ເລີຍ ແລະ ໃນຂະນະດຽວກັນລູກຄ້າຂອງ BIC ສາມາດນຳໃຊ້ແອັບ BIC Best ເພື່ອໂອນເງິນຫາ BCEL ໄດ້ແບບ Real Time ຕະຫຼອດ 24 ຊົ່ວໂມງ (24/7) ເໝືອນກັບການໂອນເງິນຫາບັນຊີພາຍໃນເຄືອຂ່າຍຂອງຕົນເອງສາມາດໂອນເງິນໄດ້ທັງເງິນກີບ, ບາດ ແລະ ໂດລາ (ສະຫະລັດ).

ການໂອນເງິນຂ້າມທະນາຄານແບບໃໝ່ ຈະປະຢັດເວລາ, ສະດວກ, ວ່ອງໄວທັງມີຄວາມຊັດເຈນກ່ວາເກົ່າ, ຫຼຸດຜ່ອນຂັ້ນຕອນໃນການໂອນເງິນຂ້າມທະນາຄານແບບໂດຍບໍ່ຕ້ອງເຂົ້າມາທະນາຄານ, ສິ່ງສຳຄັນສາມາດເຮັດໄດ້ທຸກທີ່ ພຽງແຕ່ມີແອັບ BCEL One ຂອງ BCEL ແລະ ຜ່ານແອັບ BIC Best ຂອງ BIC ແລະ ການຮ່ວມມືຄັ້ງນີ້ເປັນຄວາມມຸ່ງໝັ້ນຂອງ BCEL ໃນການພັດທະນາຮູບແບບໃໝ່ຂອງການໃຫ້ບໍລິການໂອນເງິນຂ້າມທະນາຄານກັບທະນາຄານພາຍໃນປະເທດ ເພື່ອຕອບສະໜອງຄວາມຕ້ອງການ ແລະ ມອບປະສົບການທີ່ດີທາງການເງິນໃຫ້ກັບລູກຄ້າ; ພ້ອມນັ້ນ, ຍັງຊ່ວຍຂະຫຍາຍຊ່ອງທາງການເຂົ້າເຖິງການບໍລິການ ແລະ ອຳນວຍຄວາມສະດວກໃຫ້ແກ່ລູກຄ້າຂອງທັງ 2 ທະນາຄານ. ໃນຕໍ່ໜ້ານີ້, 2 ທະນາຄານຈະສືບຕໍ່ຮ່ວມພັດທະນາໃຫ້ສາມາດໂອນເງິນຂ້າມທະນາຄານລະຫວ່າງ BCEL ແລະ BIC ຜ່ານ BCEL i-Bank ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ ແລະ ເຮັດໃຫ້ການໂອນເງິນຂ້າມທະນາຄານເປັນເລື່ອງງ່າຍໆ.




ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ ໄດ້ເນັ້ນວ່າ: ໃນຜ່ານມາມີຫຼາຍປະເທດໄດ້ເຮັດກ່ອນແລ້ວແຕ່ກໍ່ເປັນເລື່ອງດີທີ່ ພວກເຮົາໄດ້ມີການລິເລີ່ມ ເປັນຄັ້ງປະຫວັດສາດໃນວົງການໆເງິນຕາຂອງປະເທດເຮົາທີ່ສາມາດດຳເນີນງານໄດ້, ຄວນມີສະຕິ, ມີການ ປ້ອງກັນຄວາມສ່ຽງ, ເຖິງວ່າ BCEL ຈະມີຕົ້ນທຶນຫຼາຍກ່ວາ BIC ກ່ວາ 10 ເທົ່າຕົວ ແຕ່ກໍ່ສາມາດຮ່ວມມືກັນໄດ້ ຍ້ອນວິໃສທັດ, ຜູ້ບໍລິຫານມີຄວາມຮູ້ ຄວາມສາມາດເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມກໍ່ຄືລູກຄ້າ ແລະ ເປັນຄວາມພາກພູມໃຈຂອງພວກເຮົາ ທີ່ທັງ 2 ທະນາຄານທີ່ໄດ້ມີການໂອນເງິນຂ້າມທະນາຄານ ແລະ ຕ້ອງໄດ້ທຸ້ມເທໃຫ້ຫຼາຍທີ່ສຸດ, ມີການຖອດຖອນ-ປັບປຸງຕົນເອງ, ມີຄວາມເສຍສະຫຼະສູງຕໍ່ໂຄງການ, ຕ້ອງຄວບຄຸມຄວາມສ່ຽງໃຫ້ດີ, ປ້ອງກັນບໍ່ໃຫ້ເກີດມີຄວາມຜິດພາດ ແລະ ຫຼີກລ່ຽງການນຳເງິນທີ່ບໍ່ ຖືກຕ້ອງເຂົ້າມາໃນການໂອນ ແລະ ກໍ່ຕ້ອງໂອນໃນມູນຄ່າທີ່ເໝາະ; ບໍ່ໃຫ້ຄົນບໍ່ດີສວຍໃຊ້ ແລະ ຂໍຝາກທະນາຄານ-ສະຖາບັນການເງິນ… ຕ້ອງເຮັດໃຫ້ສັງຄົມເຊື່ອໝັ້ນ ແລະ ມີຄວາມເຊື່ອຖືສູງ.




ທ່ານ ສຸລິສັກ ທຳນຸວົງ ຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ ທຫລ ກ່າວວ່າ: ເປັນ 2 ທະນາຄານທີ່ສຳເລັດໃນການ ພັດທະນາລະບົບໂອນເງິນຂ້າມທະນາຄານຜ່ານມືຖື (Mobile App) ຊຶ່ງປະຈຸບັນ ທຫລ ເປັນຜູ້ຄວບຄຸມລະບົບການຊຳລະທີ່ສຳຄັນ ແລະ ບໍລິສັດ LAPNet ເປັນຜູ້ຄວບຄຸມລະບົບການຊຳລະທຸລະກຳຍ່ອຍເປັນ 2 ພື້ນຖານໂຄງລ່າງດ້ານການຊຳລະທີ່ຈຳເປັນ. ບັນດາຜູ້ໃຫ້ ບໍລິການຊຳລະທີ່ເລີ່ມມີຄວາມຫຼາກຫຼາຍທັງເປັນທະນາຄານທຸລະກິດ-ສະຖາບັນການເງິນ ແລະ ນິຕິບຸກຄົນ; ທຫລ ໄດ້ອະນຸຍາດໃຫ້ ດຳເນີນການບົນເງື່ອນໄຂທີ່ເມື່ອໃດທີ່ບໍລິສັດ LAPNet ເປັນຜູ້ຄວບຄຸມລະບົບການຊຳລະທຸລະກຳຍ່ອຍມີຄວາມພ້ອມແລ້ວ, 2 ທະນາຄານນີ້ຕ້ອງເຂົ້າຮ່ວມລະບົບສ່ວນກາງເພື່ອຮ່ວມກັນພັດທະນາພື້ນຖານໂຄງລ່າງນີ້ໃຫ້ມີຄວາມເຂັ້ມແຂງຮອບດ້ານເພື່ອເຊື່ອມໃຊ້ ຮ່ວມກັນໄດ້ພາຍໃນປະເທດ, ພາກພື້ນ ແລະ ສາກົນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ